**ມິຊຊາອາທິດທີ 2 ກຳມົດທຳມະດາ ປີ A**

**ວັນທີ 19 ມັງກອນ 2020**




**ພຣະວໍລະສານໂດຍນັກບຸນຢວງ 1, 29-34**

ໃນເວລານັ້ນ, ຢວງບັບຕິສຕາເຫັນພຣະເຢຊູເຈົ້າສະເດັດມາຫາຕົນຈຶ່ງກ່າວວ່າ: ນີ້ແມ່ນພຣະຊຸມພານ້ອຍຂອງພຣະເຈົ້າຜູ້ຍົກບາບໂທດຂອງໂລກ. ນີ້ຄືຜູ້ທີ່ຂ້າພະເຈົ້າໄດ້ກ່າວເຖິງແລ້ວວ່າ ຈະມີຜູ້ໜຶ່ງມາພາຍຫລັງຂ້າພະເຈົ້າ ເພິ່ນເປັນຜູ້ຍິ່ງໃຫຍ່ກວ່າຂ້າພະເຈົ້າຍ້ອນເພິ່ນເປັນຢູ່ກ່ອນຂ້າພະເຈົ້າ. ກ່ອນນັ້ນຂ້າພະເຈົ້າກໍບໍ່ຮູ້ຈັກເພິ່ນ. ການທີ່ຂ້າພະເຈົ້າມາທຳພິທີລ້າງໃນນ້ຳນີ້ ກໍເພື່ອໃຫ້ຊາດອິສຣາແອນຮູ້ແຈ້ງເຖິງພຣະອົງ.

ຢວງຈຶ່ງຢືນຢັນເປັນພິຍານໃນເລື່ອງນີ້ວ່າ: ຂ້າພະເຈົ້າໄດ້ເຫັນພຣະຈິດສະເດັດລົງມາຈາກຟ້າ ເປັນຮູບນົກກາງແກສະຖິດຢູ່ເໜືອເພິ່ນ. ກ່ອນນັ້ນຂ້າພະເຈົ້າບໍ່ຮູ້ຈັກເພິ່ນ ແຕ່ຜູ້ທີ່ໃຊ້ຂ້າພະເຈົ້າມາທຳພິທີລ້າງໃນນ້ຳນັ້ນບອກຂ້າພະເຈົ້າວ່າ: ຖ້າເຈົ້າເຫັນພຣະຈິດສະເດັດລົງມາສະຖິດຢູ່ເໜືອຜູ້ໃດ, ແມ່ນຜູ້ນັ້ນແລຈະເປັນຜູ້ໂຜດສິນລ້າງໃນພຣະຈິດເຈົ້າ. ແລ້ວຂ້າພະເຈົ້າກໍໄດ້ເຫັນ ແລະໄດ້ເປັນພິຍານຢັ້ງຢືນວ່າ: ເພິ່ນນີ້ແລ້ວ, ແມ່ນບຸດຂອງພຣະເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 1, 29-34**

ພວກເຮົາໄດ້ເລີ່ມຕົ້ນປີພິທີກໍາໃໝ່ປີ A ດ້ວຍການກ້າວເຂົ້າສູ່ກໍານົດແຫ່ງການຕຽມການບັງເກີດມາຂອງພຣະເຢຊູພຣະບຸດພຣະເຈົ້າ, ຊຶ່ງພວກເຮົາຮຽກວ່າ: ກໍານົດພຣະກຣິສຕະຄົມ. ໃນຊ່ວງເວລານີ້ບໍ່ພຽງແຕ່ແມ່ນການກະກຽມດ້ານພາຍນອກຄືການຕຽມດາວແສງສີ, ຕົ້ນໄມ້ໂນແອນ, ຖໍ້າພຣະກຸມານ. ແຕ່ຍັງເປັນຊ່ວງເວລາທີ່ພຣະກຣິສຕະຈັກເຊື້ອເຊີນພວກເຮົາໃຫ້ກະກຽມດ້ານຈິດໃຈ ດ້ວຍການຟັງວາຈາພຣະເຈົ້າທີ່ກ່າວເຖິງການບັງເກີດມາຂອງອົງພຣະເມດຊີອາຈາກບັນດາປະພາສົກ ແລະຈາກພຣະວໍລະສານ ເປັນຕົ້ນການແຈ້ງຂ່າວຂອງເທວະດາກາບຣີແອນໃຫ້ພຣະນາງມາຣີອາຜູ້ຈະເປັນມານດາຂອງພຣະເຢຊູເຈົ້າ. ເພື່ອພວກເຮົາຈະໄດ້ເຂົ້າໃຈວ່າຜູ້ທີ່ຈະບັງເກີດມານີ້ບໍ່ໄດ້ມາຈາກຄວາມປາດຖະໜາຂອງມະນຸດ, ແຕ່ແມ່ນກິດຈະການຂອງພຣະຈິດເຈົ້າ. ດັ່ງນັ້ນ, ກຸມານນ້ອຍທີ່ນອນຢູ່ໃນຖໍ້າລ້ຽງສັດຢູ່ເມືອງເບັດເລແຮມແມ່ນພຣະບຸດຂອງພຣະເຈົ້າ.

ຈາກນັ້ນ, ພວກເຮົາກໍເຂົ້າສູ່ກໍານົດພຣະກຣິສຕະສົມພົບອັນແມ່ນວັນບຸນໂນແອນ, ວັນທີ່ພຣະບຸດພຣະເຈົ້າບັງເກີດເປັນມະນຸດເພື່ອຢູ່ນໍາມະນຸດ ແລະເພື່ອນໍາມະນຸດຄືນເມືອຫາພຣະບິດາເຈົ້າສະຫວັນ. ພວກເຮົາຜູ້ທີ່ໄດ້ຟັງວາຈາພຣະເຈົ້າທີ່ກ່າວເຖິງການບັງເກີດມາຂອງພຣະບຸດພຣະອົງ, ວັນນີ້ວາຈານັ້ນໄດ້ເປັນຈິງໃນຕົວຂອງກຸມານນ້ອຍເຢຊູ ຊຶ່ງຕາພວກເຮົາໄດ້ເຫັນ, ຫູພວກເຮົາໄດ້ຍິນ ແລະມືພວກເຮົາໄດ້ສໍາພັດເຖິງພຣະວາຈານາດທີ່ຮັບເອົາກາຍເປັນມະນຸດໃນຖໍ້າລ້ຽງສັດເມືອງເບັດເລແຮມ.

ແລະພວກເຮົາໄດ້ສະຫລຸບກໍານົດພຣະກຣິສຕະສົມພົບດ້ວຍວັນສະຫລອງພຣະກຣິສໂຕຮັບສິນລ້າງ. ຍ້ອນຫຍັງ? ຍ້ອນວັນທີ່ພຣະເຢຊູເຈົ້າຮັບສິນລ້າງຈາກທ່ານຍວງທີ່ແມ່ນໍ້າຢໍແດນນັ້ນ ເປັນວັນທີ່ພຣະເຈົ້າໄຂສໍາແດງໃຫ້ນັກບຸນຍວງແລະຝູງຄົນທີ່ຢູ່ເຂດແມ່ນໍ້າຢໍແດນໃນເວລານັ້ນ ແລະພວກເຮົາໃນເວລານີ້ເຊັ່ນດຽວກັນໃຫ້ຮູ້ຈັກເຖິງພຣະບຸກຄົນທີ່ແທ້ຈິງຂອງພຣະເຢຊູເຈົ້າ. ເພາະໃນເວລານັ້ນສິ່ງທີ່ທຸກຄົນເຫັນຄື: « ທ້ອງຟ້າເປີດອອກ ມີພຣະຈິດເຈົ້າສະເດັດລົງມາເໜືອພຣະເຢຊູເຈົ້າເປັນຮູບຄືນົກກາງແກ ແລະກໍມີສຽງມາຈາກສະຫວັນກ່າວວ່າ: « ທ່ານຜູ້ນີ້ແມ່ນບຸດສຸດທີ່ຮັກຂອງເຮົາ, ເຮົາພໍໃຈໃນຕົວທ່ານເປັນຢ່າງຍິ່ງ » » (ມທ 3, 16-17). ໝາຍວ່າພຣະເຢຊູທີ່ພວກເຮົາເຫັນແລະເຊື່ອນີ້ ແມ່ນພຣະບຸດຂອງພຣະບິດາເຈົ້າແທ້ແລະແມ່ນພຣະບຸກຄົນທີສອງໃນພຣະຕຣີເອກະນຸພາບ.

ວັນນີ້, ພວກເຮົາກ້າວເຂົ້າສູ່ອາທິດທີສອງຂອງກໍານົດທໍາມະດາ. ບໍ່ໝາຍວ່າເປັນຊ່ວງເວລາທໍາມະດາບໍ່ສໍາຄັນກວ່າກໍານົດອື່ນໃນປີພິທີກໍາ, ແຕ່ກໍານົດທໍາມະດານີ້ເປັນຊ່ວງເວລາສໍາຄັນເຊັ່ນດຽວກັນ. ຍ້ອນພວກເຮົາຕ້ອງເປັນພິຍານແລະປະກາດເຖິງສິ່ງທີ່ພວກເຮົາໄດ້ເຫັນແລະໄດ້ເຊື່ອໃນອົງພຣະເຢຊູກຣິສໂຕເຈົ້າ ວ່າພຣະອົງແມ່ນພຣະບຸດຂອງພຣະເຈົ້າແທ້ໃນຊີວິດປະຈໍາວັນຂອງພວກເຮົາ.

ດັ່ງນັກບຸນຍວງຜູ້ຂຽນພຣະວໍລະສານວັນນີ້, ທ່ານເອງກໍໄດ້ເຫັນແລະໄດ້ເຊື່ອ. ດ້ວຍເຫດນີ້ທ່ານຈຶ່ງໄດ້ຖ່າຍທອດຄວາມເຊື່ອຂອງທ່ານໃຫ້ພວກເຮົາຜ່ານທາງວາຈາພຣະເຈົ້າ. ເພື່ອພວກເຮົາຈະໄດ້ເປັນໜຶ່ງດຽວໃນຄວາມເຊື່ອອັນດຽວກັນ, ໃນພຣະເຈົ້າອົງດຽວ ແລະໃນພຣະກຣິສຕະຈັກໜຶ່ງດຽວ, ສັກສິດ, ສາກົນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ